ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ສໍານັກງານຂໍ້ມູນຕ້ານການຟອກເງິນ

ເລກທີ 23 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 07 JAN 2022

## ແຈ້ງການ

**ເຖິງ:** ທ່ານ ຜູ້ອໍານວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ບໍລິສັດຫລັກຊັບ ແລະ ບໍລິສັດປະກັນໄພ ທີ່ນັບຖື,

**ເລື່ອງ:** ການເປີດນໍາໃຊ້ຟັງຊັນ (Function) ແລກປ່ຽນຂໍ້ມູນ ລະຫວ່າງສໍານັກງານຂໍ້ມູນຕ້ານຟອກເງິນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຜ່ານລະບົບລາຍງານຂອງສໍານັກງານຂໍ້ມູນຕ້ານການຟອກເງິນ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014.

ສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ ແລະ ບໍລິສັດປະກັນໄພ ໃນຂອບເຂດທົ່ວປະເທດຊາບວ່າ: ເພື່ອເຮັດໃຫ້ການຮັບ-ສົ່ງຂໍ້ມູນ ລະຫວ່າງ ສຕຟງ ກັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານໂດຍສະເພາະບັນດາສະຖາບັນການເງິນ ໃຫ້ມີຄວາມວ່ອງໄວ, ທັນສະພາບການ, ຮັກສາຄວາມລັບການລາຍງານ, ປ້ອງກັນການຕົກເຫຼ່ຍເສຍຫາຍຂອງຂໍ້ມູນ ຫຼື ເອກະສານ ທີ່ແລກປ່ຽນກັນຢ່າງປົກກະຕິລະຫວ່າງ ສຕຟງ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ.

ສະນັ້ນ, ສຕຟງ ຈຶ່ງໄດ້ປັບປຸງເພີ່ມ Function ການຮັບ-ສົ່ງຂໍ້ມູນສໍາລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນລະບົບລາຍງານຂອງ ສຕຟງ ຊຶ່ງປະເພດຂໍ້ມູນທີ່ຮັບ-ສົ່ງຜ່ານ Function ນີ້ປະກອບມີ: ເອກະສານຂໍຂໍ້ມູນຈາກ ສຕຟງ ແລະ ເອກະສານແຈ້ງຕອບຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ.

ພ້ອມດຽວກັນນີ້, ຟັງຊັນແລກປ່ຽນຂໍ້ມູນດັ່ງກ່າວແມ່ນຈະເລີ່ມເປີດນໍາໃຊ້ນັບຕັ້ງແຕ່ວັນທີ 04 ມັງກອນ 2022 ເປັນຕົ້ນໄປ (ລາຍລະອຽດການນໍາໃຊ້ແມ່ນອີງຕາມຂໍ້ 04 ຂອງຄູ່ມືການນໍາໃຊ້ສະບັບປັບປຸງປີ 2022 ຕາມທີ່ຢູ່: bit.ly/3n1H70T ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

**ຫົວໜ້າສໍານັກງານຂໍ້ມູນຕ້ານການຟອກເງິນ**

ແພງສີ ແພງເມືອງ

- **ສອບຖາມຂໍ້ມູນເພີ່ມຕື່ມ:** ພະແນກວິເຄາະຂ່າວກອງ, ເບີໂທ 021 264506, ທ ນິລັນດອນ ເພັດມະນີວົງ ເບີໂທ 020 94424771